ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ກອງປະຊຸມສໍາມະນາວຽກງານວິຊາການ ຫົວຂໍ້: "ການກະກຽມຫັນຈາກຫຼັກການ Positive List ໄປສູ່ Negative List ພາຍໃຕ້ສັນຍາການຄ້າດ້ານການບໍລິການອາຊຽນ (ASEAN Trade in Services Agreement: ATISA)



ໃນວັນທີ 27 ມັງກອນ 2026 ທີ່ ທຫລ, ກົມຮ່ວມມືສາກົນ ທຫລ ສົມທົບກັບກົມເຈລະຈາ ແລະ ຮ່ວມມືສາກົນ ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ສໍາເລັດການຈັດກອງປະຊຸມສໍາມະນາວຽກງານວິຊາການ ຫົວຂໍ້: "ການກະກຽມຫັນຈາກຫຼັກການ Positive List ໄປສູ່ Negative List ພາຍໃຕ້ສັນຍາການຄ້າດ້ານການບໍລິການອາຊຽນ (ATISA)" ໃຫ້ກຽດເປັນປະທານຮ່ວມຂອງທ່ານ ນ. ມາລີນີ ຊາວັນນາ, ວ່າການແທນຫົວໜ້າກົມຮ່ວມມືສາກົນ ທຫລ ແລະ ທ່ານ ແສງອາລຸນ ວິໄລສັກ, ຮອງຫົວໜ້າກົມເຈລະຈາ ແລະ ຮ່ວມມືສາກົນ ກະຊວງອຸດສາຫະກໍາ ແລະ ການຄ້າ ມີບັນດາຜູ້ເຂົ້າຮ່ວມຈາກຜູ້ຕາງໜ້າກົມວິຊາການກ່ຽວຂ້ອງພາຍໃນ ທຫລ, ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງການເງິນ ຫຼາຍກວ່າ 40 ທ່ານ.




ຈຸດປະສົງໃນການຈັດສຳມະນາວຽກງານວິຊາການຄັ້ງນີ້ ແມ່ນແນໃສ່ເພີ່ມທະວີການສ້າງຄວາມເຂັ້ມແຂງ, ພື້ນຖານຄວາມຮູ້, ຄວາມເຂົ້າໃຈໃຫ້ແກ່ຜູ້ເຂົ້າຮ່ວມຈາກອ້ອມຂ້າງຂະແໜງການເງິນ ແລະ ທະນາຄານ ເພື່ອກຳໄດ້ກົນໄກອັນລວມຂອງຫຼັກການ Negative List ພາຍໃຕ້ສັນຍາການຄ້າດ້ານການບໍລິການອາຊຽນ (ATISA) ແລະ ກະກຽມຈັດຕັ້ງປະຕິບັດຕາມພັນທະທີ່ຖືກມອບໝາຍໃຫ້ໄປໃນລວງດຽວກັນ. ໂດຍຜູ້ເຂົ້າຮ່ວມກໍ່ໄດ້ມີຄວາມສົນໃຈແລກປ່ຽນບົດຮຽນລະຫວ່າງກັນກັບຜູ້ບັນຍາຍ ແລະ ຜູ້ເຂົ້າຮ່ວມນຳກັນ ຕໍ່ກັບກົນໄກການນຳໃຊ້ ແລະ ຄຳແນະນຳກ່ຽວກັບການສ້າງຮ່າງ Negative List, ຮັບຮູ້ເຖິງ 1) ບັນດາຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຂອງຫຼັກການດັ່ງກ່າວ ແລະ ການກະກຽມໃສ່, 2) ແຜນການເຄື່ອນໄຫວໃນຕໍ່ໜ້າຂອງ ທຫລ ກັບ ກະຊວງກ່ຽວຂ້ອງ ແຕ່ນີ້ຈົນຮອດປີ 2027 ເພື່ອສາມາດນຳສົ່ງຮ່າງແຜນວຽກຕິດພັນກັບຫຼັກການ Negative List ໃຫ້ທັນຕາມເວລາທີ່ໄດ້ກຳນົດໄວ້.

ກອງປະຊຸມສຳມະນາ ໄດ້ດຳເນີນເປັນເວລາເຄິ່ງວັນຢ່າງມີເນື້ອໃນ ແລະ ເປັນຂະບວນຟົດຟື້ນ ຊຶ່ງຖືເປັນບາດກ້າວທີ່ສຳຄັນໃນການລິເລີ່ມການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງຊ່ວຍເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານຂອງ ທຫລ ແລະ ກະຊວງທີ່ກ່ຽວຂ້ອງ ໃນການກະກຽມຄວາມພ້ອມຮອບດ້ານໃນການຄົ້ນຄວ້າຫັນໄປສູ່ຫຼັກການ Negative List ພາຍໃຕ້ສັນຍາການຄ້າດ້ານການບໍລິການອາຊຽນ (ATISA) ຂອງຂະແໜງການເງິນ ແລະ ທະນາຄານໃຫ້ສຳເລັດຕາມແຜນການທີ່ວາງໄວ້.

**ພາບ ແລະ ຂ່າວ: ກົມຮ່ວມມືສາກົນ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**